ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

ເລກທີ 1190/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 30 ທັນວາ 2019

# ຂໍ້ຕົກລົງ
# ວ່າດ້ວຍບັນຊີທີ່ບໍ່ມີການເຄື່ອນໄຫວ

- ອີງຕາມກົດໝາຍ ວ່າດ້ວຍທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍ ວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມການຄົ້ນຄວ້າ ແລະ ສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 179/ກຄທ, ລົງວັນທີ 06 ທັນວາ 2019.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ອອກຂໍ້ຕົກລົງ:**

## ໝວດທີ I
## ຂໍ້ກຳນົດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການປະຕິບັດຕໍ່ບັນຊີທີ່ບໍ່ມີການເຄື່ອນໄຫວຢູ່ທະນາຄານ ເພື່ອເປັນບ່ອນອີງໃຫ້ແກ່ທະນາຄານ ໃນການປະຕິບັດຕໍ່ບັນຊີດັ່ງກ່າວ, ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຊົມໃຊ້ ປະກອບສ່ວນເຂົ້າໃນການເພີ່ມທະວີຄວາມເຊື່ອໝັ້ນໃນລະບົບທະນາຄານ.

### ມາດຕາ 2 ອະທິບາຍຄຳສັບ

ບັນດາຄຳສັບຕ່າງໆ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທຫລ** ໝາຍເຖິງ ທະນາຄານແຫ່ງ ສປປ ລາວ.
2. **ທະນາຄານ** ໝາຍເຖິງ ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ສ້າງຕັ້ງຂຶ້ນພາຍໃຕ້ກົດໝາຍຂອງ ສປປ ລາວ.
3. **ບັນຊີ** ໝາຍເຖິງບັນຊີເງິນຝາກປະເພດຕ່າງໆ ທີ່ລູກຄ້າເປີດໄວ້ກັບທະນາຄານ.
4. **ທຸລະກຳ** ໝາຍເຖິງ ການເຮັດທຸລະກຳຜ່ານບັນຊີເງິນຝາກ ເປັນຕົ້ນ ການຝາກ, ການຖອນ, ການແລກປ່ຽນສະກຸນເງິນຜ່ານບັນຊີເງິນຝາກ ຫຼື ການໂອນເງິນ ບໍ່ວ່າຈະເປັນໃນຮູບແບບຜ່ານເງິນສົດ, ແຊັກ, ການສັ່ງຈ່າຍ ຫຼື ຜ່ານເຄື່ອງມືອື່ນໆ ແຕ່ບໍ່ລວມເອົາທຸລະກຳທີ່ເຮັດໂດຍທະນາຄານ ເຊັ່ນ: ການໂອນດອກເບ້ຍເຂົ້າ ແລະ ການເກັບຄ່າທຳນຽມບຳລຸງຮັກສາບັນຊີດັ່ງກ່າວ.

5. **ທຸລະກຳທີ່ປະຕິບັດໂດຍເຈົ້າຂອງບັນຊີ** ໝາຍເຖິງ ການເຮັດທຸລະກຳຂອງເຈົ້າຂອງບັນຊີເອງ ຕໍ່ບັນຊີເງິນຝາກຂອງຕົນ ທີ່ໄດ້ເປີດໄວ້ກັບທະນາຄານ ຫຼື ການດຳເນີນການຂອງຜູ້ທີ່ໄດ້ຮັບມອບສິດຢ່າງເປັນລາຍລັກອັກສອນໃຫ້ດຳເນີນທຸລະກຳແທນ.
6. **ບັນຊີທີ່ບໍ່ມີການເຄື່ອນໄຫວ** ໝາຍເຖິງ ບັນຊີເງິນຝາກ ທີ່ບໍ່ມີທຸລະກຳທີ່ປະຕິບັດໂດຍເຈົ້າຂອງບັນຊີ ຫຼື ບໍ່ມີການຕິດຕໍ່ພົວພັນກັບທະນາຄານ ເປັນຕົ້ນ ການກວດເບິ່ງຍອດເຫຼືອໃນບັນຊີ, ການຂໍໃບລາຍງານບັນຊີສຳຮອງ (Bank Statement) ຢູ່ທະນາຄານ ຫຼື ຜ່ານລະບົບເອເລັກໂຕຼນິກ ຫຼື ຜ່ານເຄື່ອງມືອື່ນ ເປັນໄລຍະເວລາຕິດຕໍ່ກັນ 1 ປີ ນັບຈາກ (1) ມື້ທີ່ເຈົ້າຂອງບັນຊີ ເຮັດທຸລະກຳຜ່ານບັນຊີຄັ້ງສຸດທ້າຍ ສຳລັບບັນຊີເງິນຝາກກະແສລາຍວັນ ແລະ ບັນຊີເງິນຝາກປະຢັດ ຫຼື (2) ມື້ຄົບກຳນົດສັນຍາ ສຳລັບບັນຊີເງິນຝາກມີກຳນົດ.

**ມາດຕາ 3 ຫຼັກການລວມ**

ໃນການບໍລິຫານບັນຊີຂອງລູກຄ້າ, ທະນາຄານ ຕ້ອງປະຕິບັດຕາມຫຼັກການລວມ ດັ່ງນີ້:

1. ມີຄູ່ມືບໍລິຫານເງິນຝາກ ທີ່ລະອຽດ ແລະ ຮັດກຸມ ຊຶ່ງໃນນັ້ນ ໃຫ້ກຳນົດລະອຽດ ກ່ຽວກັບ ລະບຽບການ ແລະ ມາດຕະການແກ້ໄຂຕໍ່ບັນຊີທີ່ບໍ່ມີການເຄື່ອນໄຫວ ໂດຍໃຫ້ສອດຄ່ອງກັບ ຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງຂອງ ສປປ ລາວ;
2. ເຄົາລົບສິດ ແລະ ຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍ ຂອງລູກຄ້າ;
3. ຮັກສາຄວາມລັບຂອງລູກຄ້າ ຍົກເວັ້ນກໍລະນີທີ່ມີການຮຽກເອົາຂໍ້ມູນດັ່ງກ່າວໂດຍ ທຫລ ຫຼື ພາກສ່ວນອື່ນທີ່ກຳນົດໃນກົດໝາຍທີ່ກ່ຽວຂ້ອງ;
4. ສະໜອງຂໍ້ມູນຢ່າງຄົບຖ້ວນ ແລະ ອະທິບາຍໃຫ້ລູກຄ້າເຂົ້າໃຈແຈ້ງ ກ່ຽວກັບຄຸນລັກສະນະ, ຄວາມຮັບຜິດຊອບທຸກເງື່ອນໄຂຂອງການເປີດ ແລະ ນຳໃຊ້ບັນຊີດັ່ງກ່າວ ລວມທັງລະບຽບການປະຕິບັດຕໍ່ບັນຊີທີ່ບໍ່ມີການເຄື່ອນໄຫວ ໂດຍໃຫ້ລູກຄ້າຂຽນ ແລະ ເຊັນຢັ້ງຢືນໃນສັນຍາເປີດບັນຊີວ່າ ລູກຄ້າມີຄວາມເຂົ້າໃຈຕໍ່ທຸກເງື່ອນໄຂດັ່ງກ່າວ ໃນເວລາລູກຄ້າຂໍເປີດບັນຊີໃດໜຶ່ງ;
5. ກຳນົດໃຫ້ລູກຄ້າ ທີ່ຂໍເປີດບັນຊີໃໝ່ແຈ້ງ ລາຍຊື່ ແລະ ຂໍ້ມູນຕິດຕໍ່ຂອງຍາດພີ່ນ້ອງ ຫຼື ບຸກຄົນຜູ້ໃກ້ຊິດຂອງຜູ້ກ່ຽວ ຢ່າງໜ້ອຍ 2 ຄົນ ເວັ້ນແຕ່ກໍລະນີລູກຄ້າປະຕິເສດຈະໃຫ້ຂໍ້ມູນດັ່ງກ່າວ;
6. ກໍລະນີບັນຊີທີ່ເປີດໃນນາມອົງກອນ, ແມ່ນໃຫ້ເກັບກຳຂໍ້ມູນຂອງຜູ້ອຳນວຍການ, ຜູ້ມີສິດອຳນາດລົງລາຍເຊັນໃນນາມອົງກອນ ແລະ ບຸກຄົນອື່ນຕາມລະບຽບການທີ່ກ່ຽວຂ້ອງ;
7. ບໍ່ກຳນົດໃຫ້ມີການສະຫຼະສິດໃດໆຂອງລູກຄ້າ ໃນສັນຍາລະຫວ່າງ ທະນາຄານ ແລະ ລູກຄ້າ;

## ໝວດທີ II
## ລະບຽບການປະຕິບັດ ຕໍ່ບັນຊີທີ່ບໍ່ມີການເຄື່ອນໄຫວ

**ມາດຕາ 4 ການຈັດປະເພດ ແລະ ຕິດຕາມບັນຊີ ທີ່ບໍ່ມີການເຄື່ອນໄຫວ**

ທະນາຄານ ຕ້ອງມີລະບົບເພື່ອໃຫ້ສາມາດຕິດຕາມ, ສັງລວມ ແລະ ຈັດປະເພດບັນຊີທີ່ບໍ່ມີການເຄື່ອນໄຫວ ຕາມຂໍ້ຕົກລົງສະບັບນີ້ຢ່າງມີປະສິດທິຜົນ.

ທະນາຄານ ຕ້ອງແຍກບັນຊີທີ່ບໍ່ມີການເຄື່ອນໄຫວ ໄວ້ໃນຫົວບັນຊີເງິນຝາກທີ່ບໍ່ມີການເຄື່ອນໄຫວ ຕາມຜັງບັນຊີທະນາຄານ ທີ່ອອກໂດຍ ທຫລ.

**ມາດຕາ 5 ການຕິດຕໍ່ເຈົ້າຂອງບັນຊີ**

ກ່ອນໜ້າ 3 ເດືອນ ທີ່ບັນຊີຈະຖືກຈັດປະເພດ ເປັນບັນຊີບໍ່ມີການເຄື່ອນໄຫວ, ທະນາຄານຕ້ອງຕິດຕໍ່ຫາເຈົ້າຂອງບັນຊີ ເພື່ອແຈ້ງສະຖານະບັນຊີເງິນຝາກໃຫ້ຜູ້ກ່ຽວຊາບ ແລະ ສອບຖາມຄວາມຕ້ອງການສືບຕໍ່ຮັກສາບັນຊີດັ່ງກ່າວ. ຖ້າເຈົ້າຂອງບັນຊີ ຕ້ອງການສືບຕໍ່ນຳໃຊ້ບັນຊີເງິນຝາກດັ່ງກ່າວ ຖືວ່າເປັນການຕິດຕໍ່ພົວພັນກັບທະນາຄານທີ່ລະບຸໄວ້ ຢູ່ ຂໍ້ 5 ມາດຕາ 2 ແລະ ບໍ່ໃຫ້ຈັດເປັນບັນຊີທີ່ບໍ່ມີການເຄື່ອນໄຫວ.

ພາຍຫຼັງ ບັນຊີໄດ້ຖືກຈັດປະເພດ ເປັນບັນຊີທີ່ບໍ່ມີການເຄື່ອນໄຫວ, ທະນາຄານ ຕ້ອງພະຍາຍາມຕິດຕໍ່ເຈົ້າຂອງບັນຊີ, ໃນກໍລະນີທີ່ຕິດຕໍ່ເຈົ້າຂອງບັນຊີບໍ່ໄດ້ ແມ່ນໃຫ້ຕິດຕໍ່ຍາດພີ່ນ້ອງ ຫຼື ບຸກຄົນທີ່ໃກ້ຊິດຂອງຜູ້ກ່ຽວດ້ວຍຫຼາຍຊ່ອງທາງ ເຊັ່ນ: ໂທລະສັບ, ອີເມວ, ຈົດໝາຍ, ເຂົ້າໄປຕິດຕໍ່ພົວພັນໂດຍກົງ ຫຼື ຊ່ອງທາງອື່ນໆທີ່ເໝາະສົມ. ກໍລະນີເປັນບັນຊີຂອງອົງກອນ ແມ່ນໃຫ້ຕິດຕໍ່ຜູ້ອຳນວຍການ, ຜູ້ມີສິດອຳນາດລົງລາຍເຊັນໃນນາມອົງກອນ ຫຼື ຜູ້ທີ່ທະນາຄານ ໄດ້ເກັບກຳຂໍ້ມູນໃນມື້ເປີດບັນຊີ.

**ມາດຕາ 6 ການລະງັບບັນຊີທີ່ບໍ່ມີການເຄື່ອນໄຫວ**

ພາຍຫຼັງບັນຊີ ຖືກຈັດປະເພດເປັນບັນຊີທີ່ບໍ່ມີການເຄື່ອນໄຫວ, ທະນາຄານ ຕ້ອງລະງັບການນຳໃຊ້ບັນຊີດັ່ງກ່າວ ເປັນເວລາ 5 ປີ ເພື່ອສະກັດກັ້ນທຸລະກຳ ທີ່ບໍ່ໄດ້ຮັບອະນຸຍາດ, ເວັ້ນແຕ່ການລະງັບດັ່ງກ່າວ ໄດ້ຖືກຍົກເລີກ ພາຍໃຕ້ເງື່ອນໄຂທີ່ກຳນົດໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 7 ການຍົກເລີກ ການລະງັບບັນຊີທີ່ບໍ່ມີການເຄື່ອນໄຫວ**

ທະນາຄານ ສາມາດຍົກເລີກການລະງັບບັນຊີທີ່ບໍ່ມີການເຄື່ອນໄຫວ ຕາມເງື່ອນໄຂທັງໝົດ ດັ່ງນີ້:

1. ເຈົ້າຂອງບັນຊີ ທີ່ຖືກລະງັບ ມາຂໍເຮັດທຸລະກຳຜ່ານບັນຊີດັ່ງກ່າວຄືນ;
2. ໄດ້ຜ່ານການກວດສອບເຫດຜົນການບໍ່ມີທຸລະກຳໃນໄລຍະຜ່ານມາ, ຢັ້ງຢືນຕົວຕົນເຈົ້າຂອງບັນຊີ ຫຼື ຜູ້ສືບທອດຂອງຜູ້ກ່ຽວ ຢ່າງລະອຽດ ໂດຍຜ່ານຂັ້ນຕອນການຮູ້ຈັກລູກຄ້າ;
3. ໄດ້ເກັບກຳ ແລະ ປັບປຸງຂໍ້ມູນຂອງລູກຄ້າ ທີ່ມີການປ່ຽນແປງ ເຂົ້າໃນຖານຂໍ້ມູນຂອງທະນາຄານ;
4. ເຫັນວ່າ ການຂໍນຳໃຊ້ບັນຊີດັ່ງກ່າວຄືນ ແມ່ນບໍ່ຂັດກັບກົດໝາຍ ຫຼື ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

ພາຍຫຼັງການຍົກເລີກ ການລະງັບບັນຊີບໍ່ມີການເຄື່ອນໄຫວ ທີ່ກ່າວມາຂ້າງເທິງ ແມ່ນໃຫ້ຖືວ່າບັນຊີດັ່ງກ່າວ ໄດ້ກາຍເປັນບັນຊີທີ່ເຄື່ອນໄຫວປົກກະຕິ. ການຍົກເລີກການລະງັບດັ່ງກ່າວ ແມ່ນບໍ່ໄດ້ເສຍຄ່າທຳນຽມໃດໆ.

**ມາດຕາ 8 ການຈ່າຍດອກເບ້ຍ ແລະ ການຫັກເອົາຄ່າທຳນຽມ**

ທະນາຄານ ຕ້ອງສືບຕໍ່ປະຕິບັດພັນທະຈ່າຍດອກເບ້ຍ ແລະ ສາມາດຫັກເອົາຄ່າທຳນຽມຕໍ່ບັນຊີທີ່ບໍ່ມີການເຄື່ອນໄຫວ.

ທະນາຄານ ຕ້ອງຢຸດຕິການຫັກເອົາຄ່າທຳນຽມດັ່ງກ່າວ ເມື່ອຍອດເງິນເຫຼືອໃນບັນຊີທີ່ກ່ຽວຂ້ອງ ເທົ່າສູນ. ໃນກໍລະນີທີ່ຄ່າທຳນຽມດັ່ງກ່າວ ຫຼາຍກວ່າຍອດເຫຼືອໃນບັນຊີ ແມ່ນໃຫ້ຫັກເອົາຕາມຍອດເຫຼືອຕົວຈິງໃນບັນຊີດັ່ງກ່າວ.

**ມາດຕາ 9 ການປິດບັນຊີທີ່ບໍ່ມີການເຄື່ອນໄຫວ**

ທະນາຄານ ສາມາດປິດບັນຊີທີ່ບໍ່ມີການເຄື່ອນໄຫວ ໃນກໍລະນີດັ່ງນີ້:

1. ຍອດເງິນເຫຼືອໃນບັນຊີ ເທົ່າສູນ;
2. ມີຄໍາສັ່ງ ຫຼື ຄໍາຕັດສິນຂອງສານ ໃຫ້ປິດບັນຊີດັ່ງກ່າວ;
3. ເມື່ອຄົບໄລຍະລະງັບ 5 ປີ ຕາມທີ່ກໍານົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້;
4. ສາມາດຢັ້ງຢືນໄດ້ວ່າເຈົ້າຂອງບັນຊີ ເສຍຊີວິດ ຫຼື ສານຕັດສິນວ່າເປັນຜູ້ສູນຫາຍ ໂດຍບໍ່ມີຜູ້ສືບທອດ.

ແຕ່ກ່ອນໜ້າ 14 ວັນ ຂອງການປິດບັນຊີທີ່ບໍ່ມີການເຄື່ອນໄຫວ, ທະນາຄານ ຕ້ອງແຈ້ງໃຫ້ເຈົ້າຂອງບັນຊີຊາບ ກ່ຽວກັບການປິດບັນຊີດັ່ງກ່າວ, ຖ້າຕິດຕໍ່ເຈົ້າຂອງບັນຊີບໍ່ໄດ້ ແມ່ນໃຫ້ແຈ້ງຍາດພີ່ນ້ອງ ຫຼື ບຸກຄົນຜູ້ໃກ້ຊິດຂອງຜູ້ກ່ຽວ. ກໍລະນີບັນຊີທີ່ເປີດໃນນາມອົງກອນ, ແມ່ນໃຫ້ຕິດຕໍ່ຜູ້ອໍານວຍການ, ຜູ້ມີສິດອໍານາດລົງລາຍເຊັນໃນນາມອົງກອນ ຫຼື ຜູ້ທີ່ທະນາຄານ ໄດ້ເກັບກໍາຂໍ້ມູນໃນມື້ເປີດບັນຊີ.

**ມາດຕາ 10 ການປະຕິບັດຕໍ່ເງິນ ໃນບັນຊີທີ່ບໍ່ມີການເຄື່ອນໄຫວ**

ເມື່ອປິດບັນຊີທີ່ບໍ່ມີການເຄື່ອນໄຫວ ຕາມເງື່ອນໄຂທີ່ກໍານົດໄວ້ໃນຂໍ້ 3 ແລະ 4 ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້, ໃຫ້ທະນາຄານ ຢຸດຕິການຈ່າຍດອກເບ້ຍ ແລະ ຢຸດຕິການຫັກຄ່າທໍານຽມ ຕໍ່ບັນຊີດັ່ງກ່າວ ແລະ ໃຫ້ໂອນເງິນຍອດເຫຼືອທັງໝົດ ມາຢູ່ໃນການຄຸ້ມຄອງຂອງ ທຫລ ພາຍໃນ 30 ວັນ ຫຼັງການປິດບັນຊີດັ່ງກ່າວ.

ພາຍຫຼັງທີ່ໄດ້ໂອນເຂົ້າໃນການຄຸ້ມຄອງຂອງ ທຫລ ເຈົ້າຂອງບັນຊີ ຫຼື ຜູ້ສືບທອດ ຍັງມີສິດຮຽກຮ້ອງເພື່ອທວງເອົາເງິນຄືນ ໂດຍສະເໜີຜ່ານທະນາຄານ. ທະນາຄານ ຕ້ອງກວດສອບເຫດຜົນການບໍ່ມີທຸລະກໍາໃນໄລຍະຜ່ານມາ, ຢັ້ງຢືນຕົວຕົນເຈົ້າຂອງບັນຊີ ຫຼື ຜູ້ສືບທອດຂອງຜູ້ກ່ຽວ ຢ່າງລະອຽດ ສອດຄ່ອງຕາມລະບຽບກົດໝາຍ. ພາຍຫຼັງໄດ້ຮັບການຢັ້ງຢືນຄວາມຖືກຕ້ອງແລ້ວ ທະນາຄານ ຕ້ອງສະເໜີມາຍັງ ທຫລ ເພື່ອພິຈາລະນາໂອນເງິນຄືນໃຫ້ທະນາຄານ ເພື່ອສົ່ງຄືນໃຫ້ແກ່ເຈົ້າຂອງບັນຊີ ຫຼື ຜູ້ສືບທອດຂອງຜູ້ກ່ຽວ.

## ໝວດທີ III
## ຂໍ້ກໍານົດອື່ນໆ

**ມາດຕາ 11 ການເກັບຮັກສາຂໍ້ມູນ**

ທະນາຄານ ຕ້ອງເກັບຮັກສາຂໍ້ມູນປະເພດເອກະສານ ກ່ຽວກັບບັນຊີທີ່ບໍ່ມີການເຄື່ອນໄຫວ ເພື່ອອໍານວຍຄວາມສະດວກໃນການກວດກາ ຫຼື ການດໍາເນີນການທາງກົດໝາຍ ທີ່ອາດເກີດຂຶ້ນ, ຊຶ່ງຕ້ອງເກັບຮັກສາໄວ້ຢ່າງໜ້ອຍ ຕາມໄລຍະເວລາທີ່ກໍານົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 12 ການລາຍງານ**

ທະນາຄານ ຕ້ອງລາຍງານມາຍັງກົມຄຸ້ມຄອງທະນາຄານທຸລະກິດ ກ່ຽວກັບຂໍ້ມູນບັນຊີທີ່ບໍ່ມີການເຄື່ອນໄຫວ ອີງຕາມແບບພິມລາຍງານການແຍກບັນຊີເງິນຝາກທີ່ບໍ່ມີການເຄື່ອນໄຫວ. ການລາຍງານ ຕ້ອງປະຕິບັດຕາມລະບອບການລາຍງານ ທີ່ ທຫລ ກໍານົດ.

**ມາດຕາ 13 ການກວດກາ**

ທຫລ ຈະດຳເນີນການກວດກາການປະຕິບັດຂໍ້ຕົກລົງສະບັບນີ້ ຂອງບັນດາທະນາຄານ ຕາມລະບອບການກວດກາທີ່ ທຫລ ກຳນົດໃນແຕ່ລະໄລຍະ.

ໃນກໍລະນີຈຳເປັນ, ທຫລ ຈະລົງກວດກາ ທະນາຄານດັ່ງກ່າວ ແບບສະເພາະກິດ ໂດຍບໍ່ຈຳເປັນແຈ້ງລ່ວງໜ້າ.

**ມາດຕາ 14 ມາດຕະການຕໍ່ການລະເມີດ**

ທະນາຄານ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດຕາມລະບຽບການ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ ທຫລ ວາງອອກ.

## ໝວດທີ IV
## ຂໍ້ກຳນົດສຸດທ້າຍ

**ມາດຕາ 15 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມບໍລິການທະນາຄານ ເປັນຜູ້ຕິດຕາມ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໂດຍປະສານສົມທົບກັບກົມກ່ຽວຂ້ອງ. ທະນາຄານ ມີໜ້າທີ່ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ໃຫ້ທະນາຄານ ທົບທວນຄືນບັນຊີເງິນຝາກຢູ່ທະນາຄານຂອງຕົນ, ຖ້າໃນໄລຍະຜ່ານມາ ທະນາຄານ ມີບັນຊີທີ່ກ່ຽວຂ້ອງ ກ່ອນຂໍ້ຕົກລົງສະບັບນີ້ມີຜົນສັກສິດ, ບັນຊີເງິນຝາກໃດ ທີ່ບໍ່ມີທຸລະກຳທີ່ປະຕິບັດໂດຍເຈົ້າຂອງບັນຊີ ເປັນໄລຍະເວລາ 1 ປີຂຶ້ນໄປ ແຕ່ບໍ່ຮອດ 6 ປີ ແມ່ນໃຫ້ປະຕິບັດຕາມມາດຕາ 4 ຫາ 8 ຍົກເວັ້ນວັກ 1 ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້. ຖ້າບັນຊີເງິນຝາກໃດທີ່ເຈົ້າຂອງບັນຊີ ບໍ່ເຮັດທຸລະກຳຜ່ານບັນຊີດັ່ງກ່າວເປັນໄລຍະເວລາ 6 ປີ ຂຶ້ນໄປ ແມ່ນໃຫ້ປະຕິບັດຕາມ ມາດຕາ 9 ແລະ 10 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 16 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ 15 ວັນ. ບັນດານິຕິກຳອື່ນທີ່ ທຫລ ໄດ້ອອກກ່ອນໜ້ານີ້ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ ລາວ
ຜູ້ວ່າການ

**ສອນໄຊ ສິດພະໄຊ**